ກະຊວງວິທະຍາສາດແລະເຕັກໂນໂລຊີ
ກົມຈັດຕັ້ງ
ເລກທີ - 0210 ກວຊ
ລົງວັນທີ 28 JAN 2014
ເວລາ - - 1143
ລົງເຖິງ.....

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ຫ້ອງການ

ເລກທີ 157 /ສທ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 21 JAN 2014

## <u>ສະໂໜດນຳສົ່ງ</u>

ຮຽນ: ທ່ານ ຫົວໜ້າ ຫ້ອງການ ກະຊວງ ວິທະຍາສາດ - ເຕັກໂນໂລຊີ

| ລຳດັບ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ແຈ້ງການ: ໃຫ້ເອົາໃຈໃສ່ປ້ອງກັນພະຍາດໄຂ້ຫວັດລະດູການ ແລະ ພະຍາດໄຂ້ຫວັດສັດປີກ | 01 ສະບັບ | |

ຈຸດປະສົງຂອງການນຳສົ່ງເອກະສານ:

- ເພື່ອແຈ້ງການໃຫ້ເອົາໃຈໃສ່ປ້ອງກັນພະຍາດໄຂ້ຫວັດ ລະດູການ ແລະ ພະຍາດໄຂ້ຫວັດສັດປີກ
- ເພື່ອໃຫ້ທຸກພາກສ່ວນນຳແຈ້ງການດັ່ງກ່າວ ໄປເຜີຍແຜ່, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ.

ດັ່ງນັ້ນ ຈຶ່ງໄດ້ແຈ້ງການໃຫ້ທ່ານຊາບ ເພື່ອນຳໄປຈັດຕັ້ງປະຕິບັດ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຫົວໜ້າຫ້ອງການກະຊວງສາທາລະນະສຸກ

ດຣ. ເນົາ ບຸດຕາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ ເລກທີ 0106 /ສທ

ນະຄອນຫຼວງວຽງຈັນ, ວັນທີ 20 JAN 2014

# ແຈ້ງການ

ເຖິງ: ບັນດາອົງການຈັດຕັ້ງພັກ-ລັດ, ພະນັກງານ, ທະຫານ, ຕຳຫຼວດ ເອກະຊົນ, ແລະ ພໍ່ແມ່ປະຊາຊົນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ເອົາໃຈໃສ່ປ້ອງກັນພະຍາດໄຂ້ຫວັດລະດູການຊະນິດຕ່າງໆ ແລະ ພະຍາດໄຂ້ຫວັດສັດປີກ ເຊັ່ນ: H5N1, H5N2, H7N9 ແລະ H10N8.

- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 1855/ຫລບ, ລົງວັນທີ່ 10/12/2013 ວ່າດ້ວຍການຕິດຕາມເຝົ້າລະວັງ, ຕ້ານ ແລະ ຄວບຄຸມພະຍາດສັດ.
- ອີງຕາມ **ກອງປະຊຸມຮ່ວມກັນລະຫວ່າງກະຊວງສາທາລະນະສຸກ (ກົມຄວບຄຸມພະຍາດຕິດຕໍ່, ສູນວິເຄາະ ແລະ ລະບາດວິທະຍາ) ສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້ (ກົມລ້ຽງສັດ ແລະ ການປະມົງ, ສູນວິໄຈພະຍາດສັດ), ອົງການອະນາໄມໂລກ ແລະ ອົງການອາຫານ ແລະ ການກະເສດໂລກ, ຄັ້ງວັນທີ 26/12/13.**

ກະຊວງສາທາລະນະສຸກ, ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ເນື່ອງຈາກວ່າມີການປ່ຽນແປງທາງດ້ານດິນຟ້າອາກາດ: ອາກາດເຢັນ ແລະ ໜາວກ່ວາຊຸມປີ ຜ່ານມາສົມທົບກັບມີການລະບາດຂອງພະຍາດ ໄຂ້ຫວັດຊະນິດຕ່າງໆທີ່ເກີດຈາກສັດປີກ, ຊຶ່ງເກີດຢູ່ບັນດາປະເທດທີ່ມີ ຊາຍແດນຕິດກັບປະເທດເຮົາ; ຕໍ່ສະພາບ ການດັ່ງກ່າວ ກະຊວງສາທາລະນະສຸກໄດ້ສົມທົບກັບກະຊວງກະສິກຳ ແລະ ປ່າໄມ້, ອົງການຈັດຕັ້ງສາກົນໄດ້ຈັດກອງປະຊຸມປຶກສາຫາລື ແລະ ຄົ້ນຄ້ວາມາດຕະການໃນເບື້ອງຕົ້ນທີ່ເໝາະສົມເພື່ອຕອບໂຕ້ທຸກປັດໄຈສ່ຽງທີ່ອາດຈະພາໃຫ້ມີການລະບາດຂອງພະຍາດດັ່ງກ່າວຂ້າງເທິງ. ກະຊວງສາທາລະນະສຸກ ຈຶ່ງຂໍແນະນຳ ໃຫ້ບັນດາບັນດາອົງການຈັດຕັ້ງພັກ ລັດ,ພະນັກງານ, ທະຫານ, ຕຳຫຼວດ, ເອກະຊົນ ແລະ ພໍ່ແມ່ປະຊາຊົນ ໃນຂອບເຂດທົ່ວປະເທດ ໃຫ້ພ້ອມກັນປະຕິບັດຫຼັກການອະນາໄມ 3 ສະອາດເພື່ອຫຼີກລ່ຽງບັນດາປັດໄຈສ່ຽງຕໍ່ການເກີດພະຍາດດັ່ງກ່າວໂດຍເອົາໃຈໃສ່ປະຕິບັດຕາມຄຳແນະນຳ ດັ່ງລຸ່ມນີ້:

1. ຫຼີກລ້ຽງການສຳພັດກັບສັດປີກ ທີ່ເຫງົາ ຫຼື ເສຍຊີວິດ, ໃຫ້ເດັກນ້ອຍຢູ່ຫ່າງຈາກສັດປີກ
2. ຫຼີກລ້ຽງການສຳພັດກັບອາຈົມ ແລະ ເລືອດຂອງສັດ ປີກ
3. ຫ້າມກິນສັດປີກທີ່ບໍ່ສຸກດີ, ຄວນປຸງແຕ່ງສັດປີກໃຫ້ສຸກຮອດພາຍໃນ ແລະ ບໍ່ຄວນໃຫ້ຊີ້ນດິບສຳພັດກັບຊີ້ນສຸກ
4. ອານາໄມພາຊະນະແຕ່ງກິນທຸກຄັ້ງ ກ່ອນປຸງແຕ່ງອາຫານ
5. ຄວນລ້າງມືໃສ່ສະບູທຸກຄັ້ງ ພາຍຫຼັງສຳພັດກັບສັດປີກ
6. ກ່ອນປຸງແຕ່ງ ຫຼື ກ່ອນກິນອາຫານ ຄວນລ້າງມືໃຫ້ສະອາດທຸກຄັ້ງ

7. ເວລາໄອ ຫຼື ຈາມຕ້ອງ ອັດປາກ ແລະ ດັງ
8. ກະຊວງສາທາລະນະສຸກ ແລະ ອົງການອານາໄມໂລກຍັງບໍ່ທັນແນະນຳມາດຕະການສະເພາະຕໍ່ຜູ້ທີ່ເດີນທາງໃນເວລານີ້
9. ສັດປີກ, ຜະລິດຕະພັນສັດປີກ (ໄຂ່) ແລະ ຊີ້ນໝູແມ່ນມີຄວາມປອດໄພຕໍ່ການບໍລິໂພກ ຫາກປຸງແຕ່ງໃຫ້ສຸກດີ

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ສາດສະດາຈານ ດຣ.ເອກສະຫວ່າງ ວົງວິຈິດ